ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ ໄຊຍະບູລີ

ເລກທີ..883../ຈຂ.ຊຍ

ໄຊຍະບູລີ , ວັນທີ 12 ສິງຫາ 2022

# ຂໍ້ຕົກລົງ

## ວ່າດ້ວຍກອງທຶນພັດທະນາກິລາ - ກາຍຍະກຳ ແຂວງ ໄຊຍະບູລີ

- **ອີງຕາມ** ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນແຫ່ງ ສປປ ລາວ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 ພາກທີ III ໝວດທີ IV ມາດຕາ 20 ວ່າດ້ວຍສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ.
- **ອີງຕາມ** ກົດໝາຍວ່າດ້ວຍກິລາ-ກາຍຍະກຳ ສະບັບເລກທີ 74/ສພຊ, ລົງວັນ 25 ພະຈິກ 2019, ໝວດທີ 7 ມາດຕາ 67, 68 ແລະ 69 ວ່າດ້ວຍກອງທຶນກິລາ;
- **ອີງຕາມ** ຂໍ້ຕົກລົງຂອງທ່ານເຈົ້າແຂວງ ສະບັບເລກທີ 1416/ຈຂ.ຊຍ ລົງວັນທີ 25 ທັນວາ 2017 ວ່າດ້ວຍການສ້າງກອງທຶນສົ່ງເສີມ ແລະ ພັດທະນາກິລາ-ກາຍຍະກຳແຂວງ.

## ເຈົ້າແຂວງ ໄຊຍະບູລີ ຕົກລົງ:

## ໝວດທີ 1

## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ, ວິທີການຕິດຕາມກວດກາ, ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ການນຳໃຊ້ກອງທຶນພັດທະນາກິລາ-ກາຍຍະກຳ ເພື່ອປະກອບສ່ວນໃນການສະສົມທຶນ ແລະ ນຳໃຊ້ທຶນ ແນໃສ່ໃຫ້ມີທຶນພຽງພໍ, ຍືນຍົງ ເພື່ອນຳໃຊ້ເຂົ້າໃນວຽກງານກິລາ-ກາຍຍະກຳ ໃຫ້ມີຄຸນນະພາບ, ໂປ່ງໃສ, ກ້າວໜ້າ ແລະ ທັນສະໄໝ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງແຂວງ ໄຊຍະບູລີ.

### ມາດຕາ 2 ກອງທຶນພັດທະນາກິລາ-ກາຍຍະກຳແຂວງ

ກອງທຶນພັດທະນາກິລາ-ກາຍຍະກຳແຂວງ ໄຊຍະບູລີ ຂຽນຫຍໍ້: **"ກພກ"** ແມ່ນ ກອງທຶນຂອງອົງການຈັດຕັ້ງລັດ ສ້າງຕັ້ງຂຶ້ນເພື່ອປະກອບສ່ວນສະສົມທຶນ ຈາກບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ສັງຄົມທັງພາຍໃນ ແລະ ຕ່າງປະເທດ ນຳໃຊ້ເຂົ້າໃນການພັດທະນາບຸກຄະລາກອນກິລາ-ກາຍຍະກຳ, ຈັດການແຂ່ງຂັນ, ໃຫ້ຂອງຂວັນລາງວັນແກ່ບັນດາຄູຝຶກ ແລະ ນັກກິລາ ເຂົ້າຮ່ວມການແຂ່ງຂັນໃນລະດັບຊາດ, ພາກພື້ນ ແລະ ສາກົນ ຕາມລະບຽບຫຼັກການທີ່ກຳນົດໄວ້.

### ມາດຕາ 3 ການອະທິບາຍຄຳສັບ

ສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ກອງທຶນ** ໝາຍເຖິງ ການສະສົມທຶນທີ່ໄດ້ມາຈາກຫຼາຍພາກສ່ວນ ເພື່ອຮັບໃຊ້ການພັດທະນາກິລາ-ກາຍຍະກຳ;

2. **ການພັດທະນາ** ໝາຍເຖິງ ການພັດທະນາເຕັກນິກ, ທັກສະ ແລະ ຄວາມຊຳນານນັກກິລາ, ຄູຝຶກ ແລະ ກຳມະການຕັດສິນ ໃຫ້ກ້າວໄປສູ່ລະດັບແຂວງ, ລະດັບຊາດ ແລະ ສາກົນ.
3. **ບຸກຄະລາກອນກິລາ-ກາຍຍະກຳ** ໝາຍເຖິງ ຜູ້ບໍລິຫານທີ່ຮັບຜິດຊອບວຽກງານກິລາ-ກາຍຍະກຳ, ກຳມະການ, ຄູຝຶກ ແລະ ນັກກິລາ.

**ມາດຕາ 4 ຫຼັກການຄຸ້ມຄອງ ແລະ ນຳໃຊ້ກອງທຶນ**

ການຄຸ້ມຄອງ ແລະ ນຳໃຊ້ກອງທຶນຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບແນວທາງນະໂຍບາຍຂອງພັກ-ລັດ, ລັດຖະທຳມະນູນ ແລະ ກົດໝາຍ;
2. ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຂວງ;
3. ຕ້ອງຕິດພັນກັບວຽກງານການສຶກສາ-ກິລາ ແລະ ຍຸດທະສາດກິລາ-ກາຍຍະກຳແຕ່ລະໄລຍະ;
4. ຮັບປະກັນໃຫ້ໄດ້ນຳໃຊ້ໃນການຝຶກແອບ, ຝຶກຊ້ອມ, ການສະແດງ, ການແຂ່ງຂັນລະດັບທ້ອງຖິ່ນ, ລະດັບຊາດ, ພາກພື້ນ ແລະ ສາກົນ;
5. ຕ້ອງລວມສູນ, ເອກະພາບ, ຖືກຕ້ອງຕາມເປົ້າໝາຍ, ປະຢັດ, ມີປະສິດທິຜົນ, ວ່ອງໄວ, ຍຸຕິທຳ, ໂປ່ງໃສ ແລະ ສາມາດກວດສອບໄດ້;
6. ມີລະບົບການບັນທຶກລາຍຮັບ-ລາຍຈ່າຍ ທີ່ຊັດເຈນ ແລະ ດຳເນີນຜ່ານລະບົບບັນຊີຂອງຄັງເງິນແຫ່ງຊາດ ປະຈຳເມືອງ ແລະ ປະຈຳແຂວງ.

**ມາດຕາ 5 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທາງພາກລັດ ແລະ ເອກະຊົນ ພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວກ່ຽວກັບວຽກງານກິລາ-ກາຍຍະກຳຢູ່ແຂວງ ໄຊຍະບູລີ.

**ມາດຕາ 6 ການຮ່ວມມືກັບສາກົນ**

ແຂວງສົ່ງເສີມໃຫ້ມີການພົວພັນ ແລະ ຮ່ວມມືດ້ານກິລາ-ກາຍຍະກຳ ກັບຕ່າງປະເທດເພື່ອພັດທະນາກິລາ-ກາຍຍະກຳດ້ວຍການຍາດແຍ່ງທຶນ ສະໜັບສະໜູນ, ການແລກປ່ຽນບົດຮຽນ, ຂໍ້ມູນ-ຂ່າວ ສານ, ຈັດການແຂ່ງຂັນ, ເຂົ້າຮ່ວມການແຂ່ງຂັນກິລາ ແລະ ການສ້າງບຸກຄະລາກອນກິລາ-ກາຍຍະກຳ.

## ໝວດທີ 2
## ການພັດທະນາກິລາ-ກາຍຍະກຳ

**ມາດຕາ 7 ການພັດທະນານັກກິລາ ແລະ ບຸກຄະລາກອນກິລາ-ກາຍຍະກຳ**

ການພັດທະນານັກກິລາ ແມ່ນ ການເລືອກເຟັ້ນ, ການເຕົ້າໂຮມ, ການບຳລຸງ, ການສ້າງ, ຝຶກແອບ, ຝຶກຊ້ອມ, ທົດສອບ ໃນລະດັບຮຸ່ນອາຍຸຕ່າງໆລວມທັງນັກກິລາມວນຊົນໃຫ້ມີຄວາມຊຳນານ, ສຸຂະພາບແຂງແຮງ, ມີນ້ຳໃຈຮັກຊາດ, ນ້ຳໃຈດຸໝັ່ນ, ມີໄຫວພິບ ເພື່ອເຂົ້າຮ່ວມການຫຼິ້ນ, ການສະແດງ, ການແຂ່ງຂັນໃຫ້ມີປະສິດທິພາບ.

ການພັດທະນາບຸກຄະລາກອນກິລາ-ກາຍຍະກຳ ແມ່ນ ການຝຶກຊ້ອມ, ການບຳລຸງ, ການຍົກລະດັບຄວາມຮູ້ທາງດ້ານທິດສະດີ ແລະ ພາກປະຕິບັດຕົວຈິງ ກ່ຽວກັບວຽກງານກິລາ-ກາຍຍະກຳ ໃຫ້ມີປະສິດທິພາບ.

**ມາດຕາ 8 ການພັດທະນາດ້ານວິຊາການ**

ການພັດທະນາດ້ານວິຊາການ ແມ່ນ ການຄົ້ນຄວ້າ ການຊອກຮູ້, ວິໄຈ ສະຫຼຸບເປັນທິດສະດີ ແລະ ພຶດຕິກຳ ກ່ຽວກັບເຕັກນິກ ຍຸດທະວິທີ ທີ່ສົມບູນແລ້ວ ຖືກນຳໃຊ້ເຂົ້າໃນການສິດສອນ, ຝຶກອົບຮົມ, ຝຶກແອບ, ຝຶກຊ້ອມ, ທົດສອບ, ສະແດງ ແລະ ແຂ່ງຂັນກິລາ-ກາຍຍະກຳ.

# ໝວດທີ 3

## ແຫຼ່ງລາຍຮັບ ແລະ ການນຳໃຊ້ ກພກ

### ມາດຕາ 9 ແຫຼ່ງລາຍຮັບຂອງ ກພກ

ແຫຼ່ງລາຍຮັບເຂົ້າໃນກອງທຶນພັດທະນາ ກິລາ-ກາຍຍະກຳໄດ້ມາຈາກ:

1. ງົບປະມານລັດ;
2. ງົບປະມານການອອກໃບອະນຸຍາດດຳເນີນທຸລະກິດ ສະໂມສອນກິລາ, ກິລາສັດ ແລະ ຄ່າຄຸ້ມຄອງດ້ານວິຊາການສະໜາມກິລາຂອງເອກະຊົນ.
3. ການສຳປະທານ ຫຼື ເຊົ່າເດີ່ນກິລາ ບາງຄັ້ງຄາວ ເຂົ້າໃນການຈັດກິດຈະກຳອື່ນໆ 5%;
4. ການຊ່ວຍເຫຼືອ ຫຼື ອຸປະຖຳຈາກບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ;
5. ດອກເບ້ຍເງິນຝາກກອງທຶນພັດທະນາກິລາ-ກາຍຍະກຳ ແຂວງ ໄຊຍະບູລີ ຢູ່ທະນາຄານ;
6. ຮັບຈາກການປະກອບສ່ວນຂອງພະນັກງານ-ລັດຖະກອນ, ກຳລັງປະກອບອາວຸດ, ບໍລິສັດ, ລັດວິສາຫະກິດ, ຫ້າງ-ຮ້ານ ແລະ ສະຖາບັນການສຶກສາພາກເອກະຊົນ

**ກ). ພະນັກງານ-ລັດຖະກອນ (ຄິດໄລ່ຕາມຕຳແໜ່ງງານໃນດຳລັດເລກທີ 203/ລບ ລົງວັນທີ 04 ກໍລະກົດ 2017**

**1) ຕຳແໜ່ງບໍລິຫານ ຂອງພະນັກງານການນຳລະດັບສູງ:**

- ຊັ້ນ 6 ຂັ້ນ 2 — 200.000 ກີບ/ຄົນ/ປີ
- ຊັ້ນ 6 ຂັ້ນ 1 — 150.000 ກີບ/ຄົນ/ປີ

**2) ຕຳແໜ່ງບໍລິຫານລັດຖະກອນ ຂອງຜູ້ບໍລິຫານລະດັບສູງ:**

- ປະເພດ 1 — 130.000 ກີບ/ຄົນ/ປີ
- ປະເພດ 2 — 120.000 ກີບ/ຄົນ/ປີ
- ປະເພດ 3 — 100.000 ກີບ/ຄົນ/ປີ

**3) ຕຳແໜ່ງບໍລິຫານລັດຖະກອນ ຂອງຜູ້ບໍລິຫານລະດັບກາງ:**

- ປະເພດ 4 — 80.000 ກີບ/ຄົນ/ປີ
- ປະເພດ 5 — 60.000 ກີບ/ຄົນ/ປີ

**4) ຕຳແໜ່ງບໍລິຫານລັດຖະກອນ ຂອງຜູ້ບໍລິຫານລະດັບຕົ້ນ:**

- ປະເພດ 6 — 50.000 ກີບ/ຄົນ/ປີ
- ປະເພດ 7 — 40.000 ກີບ/ຄົນ/ປີ
- ປະເພດ 8 — 30.000 ກີບ/ຄົນ/ປີ

**5). ຕຳແໜ່ງບໍລິຫານລັດຖະກອນ ຂອງພະນັກງານທົ່ວໄປ (ລັດຖະກອນ)**

20.000 ກີບ/ຄົນ/ປີ

**ຂ.) ກຳລັງປະກອບອາວຸດ**

- ຊັ້ນພົນຈັດຕະວາ — 150.000 ກີບ/ຄົນ/ປີ
- ຊັ້ນພັນເອກ — 130.000 ກີບ/ຄົນ/ປີ
- ຊັ້ນພັນໂທ — 100.000 ກີບ/ຄົນ/ປີ
- ຊັ້ນພັນຕີ — 90.000 ກີບ/ຄົນ/ປີ
- ຊັ້ນຮ້ອຍເອກ — 80.000 ກີບ/ຄົນ/ປີ
- ຊັ້ນຮ້ອຍໂທ — 70.000 ກີບ/ຄົນ/ປີ
- ຊັ້ນຮ້ອຍຕີ — 60.000 ກີບ/ຄົນ/ປີ
- ຊັ້ນວາທີ — 50.000 ກີບ/ຄົນ/ປີ

- ຊັ້ນສິບເອກ 40.000 ກີບ/ຄົນ/ປີ
- ຊັ້ນສິບໂທ 30.000 ກີບ/ຄົນ/ປີ
- ຊັ້ນສິບຕີ 20.000 ກີບ/ຄົນ/ປີ
- ຊັ້ນ II ແລະ ຊັ້ນ I 10.000 ກີບ/ຄົນ/ປີ

**ຄ.) ລັດວິສາຫະກິດ**

- ຜູ້ອຳນວຍການ 120.000 ກີບ/ຄົນ/ປີ
- ຮອງອຳນວຍການບໍລິສັດ ແລະ ຫົວໜ້າສູນບໍລິການ 100.000 ກີບ/ຄົນ/ປີ
- ຫົວໜ້າຂະແໜງ 80.000 ກີບ/ຄົນ/ປີ
- ຮອງຫົວໜ້າຂະແໜງ 60.000 ກີບ/ຄົນ/ປີ
- ຫົວໜ້າໜ່ວຍງານ ແລະ ຮອງຫົວໜ້າໜ່ວຍງານ 40.000 ກີບ/ຄົນ/ປີ
- ພະນັກງານທົ່ວໄປ 20.000 ກີບ/ຄົນ/ປີ

**ງ.) ບໍລິສັດ**

- ທຸລະກິດປະເພດ I 1.000.000 ກີບ/ບໍລິສັດ/ປີ
- ທຸລະກິດປະເພດ II 700.000 ກີບ/ບໍລິສັດ/ປີ
- ທຸລະກິດປະເພດ III 500.000 ກີບ/ບໍລິສັດ/ປີ

**ຈ.) ຫ້າງຮ້ານຕ່າງໆ**

- ຮ້ານຂາຍລົດໃຫຍ່ 500.000 ກີບ/ຮ້ານ/ປີ
- ຮ້ານສ້ອມແປງລົດໃຫຍ່ 300.000 ກີບ/ຮ້ານ/ປີ
- ຮ້ານຂາຍລົດຈັກ 200.000 ກີບ/ຮ້ານ/ປີ
- ຮ້ານສ້ອມແປງລົດຈັກ 100.000 ກີບ/ຮ້ານ/ປີ
- ຮ້ານບັນເທີງ 200.000 ກີບ/ຮ້ານ/ປີ
- ຮ້ານຂາຍເຄື່ອງກໍ່ສ້າງ 200.000 ກີບ/ຮ້ານ/ປີ
- ຮ້ານຂາຍເຄື່ອງຍ່ອຍ 100.000 ກີບ/ຮ້ານ/ປີ
- ຮ້ານອາຫານທົ່ວໄປ 100.000 ກີບ/ຮ້ານ/ປີ
- ຮ້ານອາຫານໃນເຄືອຂອງຫົວໜ່ວຍທຸລະກິດທ່ອງທ່ຽວ 200.000 ກີບ/ຮ້ານ/ປີ

**ສ.) ເຮືອນພັກ-ໂຮງແຮມ**

- ເຮືອນພັກ 100.000 ກີບ/ຮ້ານ/ປີ
- ໂຮງແຮມ 300.000 ກີບ/ຮ້ານ/ປີ

**ຊ.) ສະຖາບັນການສຶກສາພາກເອກະຊົນ**

- ອານຸບານ 50.000 ກີບ/ແຫ່ງ/ປີ
- ປະຖົມສຶກສາ 70.000 ກີບ/ແຫ່ງ/ປີ
- ມັດທະຍົມສຶກສາ 100.000 ກີບ/ແຫ່ງ/ປີ
- ສູນຮຽນຮູ້ພາສາຕ່າງປະເທດ ແລະ ອົບຮົມວິຊາຊີບ 100.000 ກີບ/ແຫ່ງ/ປີ
- ວິທະຍາໄລ 120.000 ກີບ/ແຫ່ງ/ປີ

**ຍ.) ທຸລະກິດກ່ຽວກັບກິລາ**

- ກິລາສັດ 100.000 ກີບ/ແຫ່ງ/ປີ
- ສະນຸກເກີ 150.000 ກີບ/ແຫ່ງ/ປີ
- ເດີ່ນດອກປີກໄກ່ 150.000 ກີບ/ແຫ່ງ/ປີ
- ເດີ່ນບານເຕະຫຍ້າທຽມ 200.000 ກີບ/ແຫ່ງ/ປີ

7. ແຫຼ່ງລາຍຮັບອື່ນໆ ທີ່ຖືກຕ້ອງຕາມກົດໝາຍ;

ກຳນົດເວລາມອບເງິນເຂົ້າ ກພກ ຂອງແຕ່ລະພາກສ່ວນ ແມ່ນໃຫ້ປະຕິບັດໃນ ງວດ II ເດືອນພຶດສະພາ ຂອງທຸກໆປີ:

- **ຂັ້ນເມືອງ**: ໃຫ້ຫ້ອງການສຶກສາທິການ ແລະ ກິລາເມືອງ ສົມທົບກັບຫ້ອງການ ການເງິນປະຈຳເມືອງ ສັງລວມເງິນ, ໃບບິນຮັບເງິນ ພ້ອມທັງມອບເງິນ ເຂົ້າຄັງເງິນແຫ່ງຊາດປະຈຳເມືອງ ຕາມສັດສ່ວນແບ່ງປັນໃນ ຂໍ້ 4 ມາດຕາ 10 ແລ້ວໂອນເຂົ້າຕາມເລກບັນຊີບັນຊີທີ່ໄດ້ກຳນົດໄວ້ ( ມາດຕາ 12)ຈາກນັ້ນ ເຮັດໜັງສືລາຍງານໃຫ້ປະທານ ກພກ ຂັ້ນເມືອງ ແລະ ຂັ້ນແຂວງຮັບຊາບ;
- **ຂັ້ນແຂວງ**: ໃຫ້ພະແນກສຶກສາທິການ ແລະ ກິລາແຂວງ ສົມທົບກັບພະແນກການເງິນປະຈຳແຂວງ ສັງລວມເງິນ, ໃບບິນຮັບເງິນ ພ້ອມທັງມອບເງິນເຂົ້າຄັງເງິນແຫ່ງຊາດປະຈຳແຂວງ ຕາມເລກບັນຊີບັນຊີທີ່ໄດ້ກຳນົດໄວ້ ( ມາດຕາ 12)ຈາກນັ້ນ ເຮັດໜັງສືລາຍງານໃຫ້ປະທານ ກພກ ຂັ້ນແຂວງຮັບຊາບ;

**ມາດຕາ 10 ເປົ້າໝາຍການນຳໃຊ້ເງິນ ກພກ**

ກອງທຶນກິລາ-ກາຍຍະກຳ ນຳໃຊ້ເຂົ້າໃນເປົ້າໝາຍ ດັ່ງນີ້:

1. ການພັດທະນາບຸກຄະລາກອນກິລາ-ກາຍຍະກຳ ແລະ ນັກກິລາ ໃນລະດັບແຂວງ ແລະ ເມືອງ
2. ນຳໃຊ້ເຂົ້າໃນການຈັດການແຂ່ງຂັນເພື່ອຄັດເລືອກ, ການຝຶກແອບ ແລະ ການແຂ່ງຂັນກິລາໃນລະດັບ ເມືອງ, ແຂວງ, ລະດັບຊາດ ແລະ ຕາມການເຊື້ອເຊີນຂອງສະຫະພັນກິລາແຫ່ງຊາດປະເພດຕ່າງໆ (ຍົກເວັ້ນການສ້າງຂະບວນການກິລາທີ່ຕິດພັນກັບງານບຸນປະເພນີ, ງານສະເຫຼີມສະຫຼອງວັນສຳຄັນຕ່າງໆ ຂອງເມືອງ , ແຂວງຈັດຂຶ້ນ);
3. ປະຕິບັດນະໂຍບາຍຕໍ່ຄູຝຶກ ແລະ ນັກກິລາ ໃນເວລາທີ່ໄດ້ຮັບບາດເຈັບສາຫັດ 500.000 ກີບ ຫາ 1.000.000 ກີບ, ເສຍຊີວິດ 5.000.000 ກີບ ຈາກການຝຶກແອບ ແລະ ການແຂ່ງຂັນກິລາ.
4. ນຳໃຊ້ເຂົ້າໃນການຝຶກອົບຮົມຜູ້ບໍລິຫານ, ບຸກຄະລາກອນກິລາປະເພດຕ່າງໆ ແລະ ກອງປະຊຸມປະຈຳປີຂອງຄະນະ ກພກ.
5. ການແບ່ງປັນງົບປະມານລະຫວ່າງແຂວງ ກັບ ເມືອງແມ່ນປະຕິບັດດັ່ງນີ້:
   - ປີທີ່ມີການຈັດການແຂ່ງຂັນໃນລະດັບແຂວງ, ລະດັບຊາດ (ກິລາຄົນພິການ, ກິລານັກຮຽນມັດທະຍົມ ແລະ ກິລາເຂດ 8 ແຂວງພາກເໜືອ) ແມ່ນເກັບໄວ້ເມືອງ 20% ແບ່ງໃຫ້ແຂວງ 80%;
   - ປີທີ່ບໍ່ມີການຈັດການແຂ່ງຂັນໃນລະດັບແຂວງ, ລະດັບຊາດ(ກິລາຄົນພິການ, ກິລານັກຮຽນມັດທະຍົມ ແລະ ກິລາເຂດ 8 ແຂວງພາກເໜືອ) ແມ່ນເກັບໄວ້ເມືອງ 40% ແບ່ງໃຫ້ແຂວງ 60%.
   - ຖ້າປີໃດມີການຈັດການແຂ່ງຂັນລະດັບຊາດ ໂດຍລັດຖະບານມອບໃຫ້ແຂວງໄຊຍະບູລີເປັນເຈົ້າພາບ ລາຍຮັບດັ່ງກ່າວແມ່ນເກັບໄວ້ເມືອງ 10% ມອບໃຫ້ແຂວງ 90% .
6. ນຳໃຊ້ເປັນຂອງຂວັນລາງວັນ ໃຫ້ແກ່ຄູຝຶກ ແລະ ນັກກິລາທີ່ໄດ້ຮັບຫຼຽນ ຫຼື ໄຊຊະນະທີ່ພົ້ນເດັ່ນແຕ່ລະປະເພດ ດັ່ງນີ້:

**ກ. ລາງວັນຄູຝຶກ:**

1) ໄດ້ຮັບຫຼຽນຄຳ ໄດ້ຮັບເງິນ 4.000.000 ກີບ/ຄົນ/ຫຼຽນ;
2) ໄດ້ຮັບຫຼຽນເງິນ ໄດ້ຮັບເງິນ 3.000.000 ກີບ/ຄົນ/ຫຼຽນ;
3) ໄດ້ຮັບຫຼຽນທອງ ໄດ້ຮັບເງິນ 2.000.000 ກີບ/ຄົນ/ຫຼຽນ;

**ຂ. ລາງວັນນັກກິລາ:**

1) ໄດ້ຮັບຫຼຽນຄຳ ໄດ້ຮັບເງິນ 5.000.000 ກີບ/ຄົນ/ຫຼຽນ;
2) ໄດ້ຮັບຫຼຽນເງິນ ໄດ້ຮັບເງິນ 4.000.000 ກີບ/ຄົນ/ຫຼຽນ;

3) ໄດ້ຮັບຫຼຽນທອງ ໄດ້ຮັບເງິນ 3.000.000 ກີບ/ຄົນ/ຫຼຽນ.

ຄ. ຄູຝຶກ ແລະ ນັກກິລາທີ່ເຂົ້າຮ່ວມການແຂ່ງຂັນ ບໍ່ໄດ້ຫຼຽນ ຈະໄດ້ຮັບເງິນ 500.000 ກີບ/ຄົນ/ຄັ້ງ.

**ມາດຕາ 11 ວິທີການນໍາໃຊ້ເງິນ ກພກ**

ການນໍາໃຊ້ກອງທຶນຕ້ອງປະຕິບັດຕາມເປົ້າໝາຍການນໍາໃຊ້ເງິນ ກພກ ທີ່ໄດ້ກໍານົດໃນມາດຕາ 10 ຂອງຂໍ້ຕົກລົງສະບັບນີ້ ແລະ ທິດທາງແຜນການຂອງຄະນະກໍາມະການ ກພກ ວາງອອກໃນແຕ່ລະໄລຍະ.

ສໍາລັບການອະນຸມັດໃຊ້ຈ່າຍເງິນກອງທຶນໃຫ້ປະຕິບັດຕາມຂໍ້ 1 ມາດຕາ 19 ຂອງຂໍ້ຕົກລົງສະບັບນີ້ ແລະ ບໍ່ໃຫ້ໃຊ້ເງິນກອງທຶນ ກພກ ໄປນໍາໃຊ້ກິດຈະກໍາອື່ນຢ່າງເດັດຂາດ.

## ໝວດທີ 4

## ການເປີດບັນຊີ, ການກວດສອບ ແລະ ການລາຍງານ ກພກ

**ມາດຕາ 12 ບັນຊີເງິນຝາກຂອງ ກພກ**

ການເປີດບັນຊີກອງທຶນ ກພກ ແມ່ນຕ້ອງເປີດເປັນບັນຊີເງິນຢູ່ຄັງເງິນແຫ່ງຊາດ ປະຈໍາແຂວງ ໄຊຍະບູລີ ໂດຍແມ່ນພະແນກສຶກສາທິການ ແລະ ກິລາ ເປັນຜູ້ຖືບັນຊີ ແລະ ມີເລກບັນຊີ ດັ່ງລຸ່ມນີ້:

1. ທະນາຄານການຄ້າຕ່າງປະເທດລາວ
   - ຊື່ບັນຊີ: ກອງທຶນພັດທະນາກິລາ-ກາຍຍະກໍາ ແຂວງ ໄຊຍະບູລີ
   - ເລກບັນຊີ: 120110000550656001
2. ທະນາຄານພັດທະນາລາວ
   - ຊື່ບັນຊີ: ກອງທຶນພັດທະນາກໍາລາ-ກາຍຍະກໍາ ແຂວງ ໄຊຍະບູລີ
   - ເລກບັນຊີ: 0300700100000006
3. ທະນາຄານສົ່ງເສີມກະສິກໍາ
   - ຊື່ບັນຊີ: ກອງທຶນພັດທະນາກໍາລາ-ກາຍຍະກໍາ ແຂວງ ໄຊຍະບູລີ
   - ເລກບັນຊີ: 000080110000046

**ມາດຕາ 13 ການກວດສອບບັນຊີ**

ບັນຊີຂອງ ກພກ ຕ້ອງໄດ້ຮັບການກວດສອບພາຍໃນເປັນປົກກະຕິ ແລະ ການກວດສອບປະຈໍາປີ ໂດຍຄະນະບໍລິຫານກອງທຶນ ແລະ ຄະນະກວດກາກອງທຶນຕາມກົດໝາຍວ່າດ້ວຍການກວດສອບ.

ຜົນຂອງການກວດສອບ ຕ້ອງໄດ້ແຈ້ງໃຫ້ສາທາລະນະຊົນ ໄດ້ຮັບຊາບ ເພື່ອຄວາມໂປ່ງໃສໃນການນໍາໃຊ້ເງິນ ກພກ ຖ້າມີກໍລະນີນໍາໃຊ້ເງິນ ກພກ ບໍ່ຖືກຕ້ອງຕາມເປົ້າທີ່ໄດ້ກໍານົດໄວ້ຈະຖືກປະຕິບັດວິໄນຕາມແຕ່ລະກໍລະນີໜັກ ຫຼື ເບົາ ທີ່ກົດໝາຍ ແລະ ລະບຽບການກໍານົດໄວ້.

**ມາດຕາ 14 ການລາຍງານ**

ຄະນະກໍາມະການຄຸ້ມຄອງ ກພກ ຕ້ອງລາຍງານກ່ຽວກັບການນໍາໃຊ້ກອງທຶນຕໍ່ອົງການປົກຄອງເມືອງ-ແຂວງ, ຄະນະກວດກາເມືອງ-ແຂວງ ແລະ ອົງການກວດສອບປະຈໍາເມືອງ-ແຂວງ ພ້ອມທັງລາຍງານການເຄື່ອນໄຫວວຽກງານຂອງ ກພກ ໃຫ້ເປັນປົກກະຕິ.

## ໝວດທີ 5

## ຄະນະກໍາມະການຄຸ້ມຄອງ ແລະ ການຕິດຕາມ -ກວດກາ ກພກ

**ມາດຕາ 15 ຄະນະອຳນວຍການຄຸ້ມຄອງ ກພກ**

ການຄຸ້ມຄອງ ກພກ ຕ້ອງດຳເນີນຢ່າງລວມສູນ ແລະ ເປັນເອກະພາບ ໂດຍມອບໃຫ້ຫ້ອງການສຶກສາທິການ-ກິລາເມືອງ ແລະ ພະແນກສຶກສາທິການ-ກິລາແຂວງ, ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບບັນດາຫ້ອງການ, ພະແນກການ ເຊິ່ງປະກອບມີ ຄະນະອຳນວຍການຄຸ້ມຄອງ ກພກ ແລະ ກອງເລຂາ.

**ມາດຕາ 16 ຄະນະອຳນວຍການຄຸ້ມຄອງ ແລະ ຕິດຕາມກວດກາ ກພກ**

ຄະນະອຳນວຍການຄຸ້ມຄອງ ກພກ ດັ່ງນີ້:

**ກ.) ຂັ້ນແຂວງ**

| | |
|---|---|
| 1. ທ່ານ ຮອງເຈົ້າແຂວງ | ເປັນປະທານ |
| 2. ທ່ານ ຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ | ຮອງປະທານ |
| 3. ທ່ານ ຫົວໜ້າຫ້ອງວ່າການແຂວງ | ຮອງປະທານ |
| 4. ທ່ານ ຮອງຫົວໜ້າພະແນກການເງິນປະຈຳແຂວງ | ຮອງປະທານ |
| 5. ທ່ານ ຮອງຫົວໜ້າພະແນກອຸດສາຫະກຳການຄ້າແຂວງ | ຄະນະ |
| 6. ທ່ານ ຮອງຫົວໜ້າກອງພົນທະຫານຮາບທີ II | ຄະນະ |
| 7. ທ່ານ ຮອງຫົວໜ້າກອງບັນຊາການທະຫານແຂວງ | ຄະນະ |
| 8. ທ່ານ ຮອງຫົວໜ້າກອງບັນຊາການ ປກສ ແຂວງ | ຄະນະ |
| 9. ທ່ານ ຮອງເຈົ້າເມືອງ 11 ເມືອງ | ຄະນະ |

**ຂ.) ຂັ້ນເມືອງ**

| | |
|---|---|
| 1. ທ່ານ ຮອງເຈົ້າເມືອງ | ເປັນປະທານ |
| 2. ທ່ານ ຫົວໜ້າຫ້ອງການສຶກສາທິການ ແລະ ກິລາເມືອງ | ຮອງປະທານ |
| 3. ທ່ານ ຫົວໜ້າຫ້ອງວ່າການເມືອງ | ຮອງປະທານ |
| 4. ທ່ານ ຮອງຫົວໜ້າຫ້ອງການ ການເງິນປະຈຳເມືອງ | ຮອງປະທານ |
| 5. ທ່ານ ຮອງຫົວໜ້າຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ | ຄະນະ |
| 6. ທ່ານ ຮອງຫົວໜ້າກອງບັນຊາການທະຫານເມືອງ | ຄະນະ |
| 7. ທ່ານ ຮອງຫົວໜ້າກອງບັນຊາການ ປກສ ເມືອງ | ຄະນະ |

ໂຄງປະກອບຂອງຄະນະອຳນວຍການຄຸ້ມຄອງ ກພກ ຂັ້ນແຂວງ, ຂັ້ນເມືອງ ສາມາດປັບປຸງ ແລະ ປ່ຽນແປງຕາມຄວາມຈຳເປັນ ໂດຍການຕົກລົງຂອງ ທ່ານ ເຈົ້າແຂວງ, ທ່ານ ເຈົ້າເມືອງ.

**ມາດຕາ 17 ວິທີການຕິດຕາມກວດກາ ກພກ**

ຈັດຕັ້ງກອງປະຊຸມ, ຮັບຟັງການລາຍງານຜົນຂອງການຈັດຕັ້ງປະຕິບັດກອງທຶນເປັນຕົ້ນ: ລາຍຮັບ-ລາຍຈ່າຍປະຈຳປີຂອງກອງເລຂາ ໃນເດືອນ ກັນຍາ ຂອງທຸກໆປີ.

**ມາດຕາ 18 ກອງປະຊຸມຄະນະອຳນວຍການ ແລະ ຕິດຕາມກວດກາ ກພກ**

ຄະນະອຳນວຍການ ກອງທຶນພັດທະນາກິລາ-ກາຍຍະກຳ ເປີດກອງປະຊຸມສະໄໝສາມັນປີລະໜຶ່ງຄັ້ງ, ຖ້າມີຄວາມຈຳເປັນ ຫຼື ວຽກຮີບດ່ວນກໍສາມາດເປີດກອງປະຊຸມສະໄໝວິສາມັນໄດ້, ກອງປະຊຸມຈະເປີດຂຶ້ນໄດ້ ກໍ

ຕໍ່ເມື່ອມີຄະນະກຳມະການຄຸ້ມຄອງ ກພກ ເຂົ້າຮ່ວມບໍ່ໃຫ້ຫຼຸດເຄິ່ງໜຶ່ງຂອງຄະນະກຳມະການທັງໝົດ, ມະຕິກອງປະຊຸມ, ງົບປະມານຮັບໃຊ້ກອງປະຊຸມໃຫ້ປະຕິບັດຕາມລະບຽບຂອງກະຊວງການເງິນວາງອອກ.

**ມາດຕາ 19 ສິດ ແລະ ໜ້າທີ່ຂອງປະທານຄຸ້ມຄອງ ກພກ ຂັ້ນແຂວງ ແລະ ຂັ້ນເມືອງ**

ປະທານຄະນະກຳມະການຄຸ້ມຄອງ ກພກ ແຕ່ລະຂັ້ນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ມີສິດອະນຸມັດສັ່ງຈ່າຍງົບປະມານກອງທຶນຕາມການສະເໜີຂອງກອງເລຂາ ແລະ ການເຫັນດີຂອງຄະນະກຳມະການຢ່າງໜ້ອຍ 2/3 ຂອງຜູ້ເຂົ້າຮ່ວມກອງປະຊຸມ;
2. ຊີ້ນຳຄະນະ ກພກ ໃນການປະຕິບັດໜ້າທີ່ວຽກງານຮອບດ້ານ;
3. ຮຽກໂຮມ ແລະ ເປັນປະທານກອງປະຊຸມຂອງຄະນະກຳມະການ ກພກ;
4. ອະນຸມັດແຕ່ງຕັ້ງຄະນະກຳມະການ ແລະ ກອງເລຂາ;
5. ມອບສິດໃຫ້ຮອງປະທານຄະນະກຳມະການ ກພກ ປະຕິບັດໜ້າທີ່ແທນໃນເວລາຈຳເປັນ.

**ມາດຕາ 20 ສິດ ແລະ ໜ້າທີ່ຂອງຄະນະກຳມະການຄຸ້ມຄອງ ກພກ**

ຄະນະກຳມະການຄຸ້ມຄອງ ກພກ ແຕ່ລະຂັ້ນ ມີສິດ ແລະ ໜ້າທີ່ ດັ່ງນີ້:

**ກ.) ຂັ້ນແຂວງ**

1. ຄົ້ນຄວ້າເຫັນດີແຜນພັດທະນາ, ແຜນການເຄື່ອນໄຫວ ແລະ ແຜນງົບປະມານປະຈຳປີ, ແຜນໄລຍະສັ້ນ, ໄລຍະຍາວຂອງກອງທຶນ ກພກ;
2. ຄົ້ນຄວ້າເຫັນດີເອົາລະບຽບການຕ່າງໆ, ຈັດສັນທຶນເຂົ້າໃສ່ແຜນການ, ແຜນງານ ແລະ ໂຄງການຕ່າງໆ ເພື່ອນຳສະເໜີທ່ານປະທານ ກພກ ອະນຸມັດ;
3. ການຈັດລຽງບູລິມະສິດໃນການຝຶກຊ້ອມ ແລະ ເຂົ້າຮ່ວມແຂ່ງຂັນກິລາແຕ່ລະປະເພດ ໃນລະດັບແຂວງ ແລະ ລະດັບຊາດ;
4. ຊີ້ນຳ, ນຳພາ, ຊຸກຍູ້, ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານ ຄຸ້ມຄອງໃນການນຳໃຊ້ເງິນ ກພກ ໃຫ້ຖືກຕ້ອງຕາມເປົ້າໝາຍ, ມີປະສິດຕິພາບ ແລະ ປະສິດທິຜົນ;
5. ສະເໜີແຕ່ງຕັ້ງຄະນະກຳມະການ ແລະ ກອງເລຂາ ກພກ ເວລາມີການຍົກຍ້າຍ ແລະ ບຳນານ;
6. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການຄັດເລືອກ, ຝຶກຊ້ອມ, ຝຶກແອບ, ທົດສອບ, ສ້າງ, ບຳລຸງດ້ານວິຊາການໃຫ້ແກ່ນັກກິລາ, ບຸກຄະລາກອນພ້ອມທັງຈັດການແຂ່ງຂັນ ແລະ ເຂົ້າຮ່ວມແຂ່ງຂັນໃນລະດັບຕ່າງໆ;
7. ເຂົ້າຮ່ວມກອງປະຊຸມຕາມການຮຽກໂຮມຂອງປະທານ ກພກ;
8. ຄຸ້ມຄອງ, ພັດທະນາ, ນຳໃຊ້ພື້ນຖານໂຄງລ່າງ, ພາຫະນະ, ອຸປະກອນ, ງົບປະມານ ກພກ ໃຫ້ມີປະສິດທິຜົນ;
9. ລະດົມຂົນຂວາຍຊອກຫາແຫຼ່ງລາຍຮັບເຂົ້າກອງທຶນ ເພື່ອພັດທະນາ ກພກ.

**ຂ.) ຂັ້ນເມືອງ**

1. ຜັນຂະຫຍາຍທິດທາງແຜນການຂອງຄະນະ ກພກ ແຂວງ, ສ້າງແຜນການເຄື່ອນໄຫວ ແລະ ແຜນງົບປະມານປະຈຳປີ, ແຜນໄລຍະສັ້ນ, ໄລຍະຍາວຂອງທຶນ;
2. ຜັນຂະຫຍາຍລະບຽບການຕ່າງໆຂອງຄະນະ ກພກ ແຂວງ, ຈັດສັນທຶນເຂົ້າໃສ່ແຜນການ, ແຜນງານ ແລະ ໂຄງການຕ່າງໆ ເພື່ອນຳສະເໜີທ່ານປະທານ ກພກ ເມືອງ ອະນຸມັດ;
3. ການຈັດລຽງບູລິມະສິດໃນການຝຶກຊ້ອມ ແລະ ເຂົ້າຮ່ວມແຂ່ງຂັນກິລາແຕ່ລະປະເພດ ໃນລະດັບເມືອງ ແລະ ແຂວງ;
4. ຊີ້ນຳ, ນຳພາ, ຊຸກຍູ້, ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານ ຄຸ້ມຄອງໃນການນຳໃຊ້ເງິນ ກພກ ເມືອງ ໃຫ້ຖືກຕ້ອງຕາມເປົ້າໝາຍ, ມີປະສິດຕິພາບ ແລະ ປະສິດທິຜົນ;

5. ສະເໜີແຕ່ງຕັ້ງຄະນະກຳມະການ ແລະ ກອງເລຂາ ກພກ ເມືອງ ເວລາມີການຍົກຍ້າຍ ແລະ ບຳນານ;
6. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການຄັດເລືອກ, ຝຶກຊ້ອມ, ຝຶກແອບ, ທົດສອບ, ສ້າງ, ບຳລຸງດ້ານວິຊາການໃຫ້ແກ່ນັກກິລາ, ບຸກຄະລາກອນພ້ອມທັງຈັດການແຂ່ງຂັນ ແລະ ເຂົ້າຮ່ວມແຂ່ງຂັນໃນລະດັບຕ່າງໆ;
7. ເຂົ້າຮ່ວມກອງປະຊຸມຕາມການຮຽກໂຮມຂອງປະທານ ກພກ ເມືອງ;
8. ຄຸ້ມຄອງ, ພັດທະນາ, ນຳໃຊ້ພື້ນຖານໂຄງລ່າງ, ພາຫະນະ, ອຸປະກອນ,ງົບປະມານ ກພກ ໃຫ້ມີປະສິດທິຜົນ.
9. ລະດົມຂົນຂວາຍຊອກຫາແຫຼ່ງລາຍຮັບເຂົ້າກອງທຶນ ເພື່ອພັດທະນາ ກພກ ເມືອງ ແລະ ແຂວງ.

**ມາດຕາ 21 ກອງເລຂາ ກພກ**

ກອງເລຂາຄະນະກຳມະການຄຸ້ມຄອງ ກພກ ເປັນເສນາທິການໃຫ້ຄະນະກຳມະການຄຸ້ມຄອງ ກພກ ແຕ່ລະຂັ້ນ ດັ່ງນີ້:

**ກ.) ຂັ້ນແຂວງ**

| | | |
|---|---|---|
| 1. | ທ່ານ ຮອງຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ | ເປັນຫົວໜ້າ |
| 2. | ທ່ານ ຮອງຫົວໜ້າພະແນກການເງິນປະຈຳແຂວງ | ເປັນຮອງ |
| 3. | ທ່ານ ຫົວໜ້າຂະແໜງບໍລິຫານພະແນກສຶກສາທິການ ແລະ ກິລາແຂວງ | ຄະນະ |
| 4. | ທ່ານ ຫົວໜ້າຂະແໜງກວດກາປະເມີນຜົນ ແລະ ປະກັນຄຸນນະພາບ | ຄະນະ |
| 5. | ທ່ານ ຫົວໜ້າຂະແໜງກິລາກາຍຍະກຳ ແລະ ສິລະປະກຳ ພະແນກ ສກຂ | ຄະນະ |
| 6. | ທ່ານ ຮອງຫົວໜ້າຂະແໜງບໍລິຫານ (ວຽກງານການເງິນ) ພະແນກ ສກຂ | ຄະນະ |

**ຂ.) ຂັ້ນເມືອງ**

| | | |
|---|---|---|
| 1. | ທ່ານ ຮອງຫົວໜ້າຫ້ອງການສຶກສາທິການ ແລະ ກິລາເມືອງ | ເປັນຫົວໜ້າ |
| 2. | ທ່ານ ຮອງຫົວໜ້າຫ້ອງການການເງິນປະຈຳເມືອງ | ເປັນຮອງ |
| 3. | ທ່ານ ຫົວໜ້າໜ່ວຍງານບໍລິຫານຫ້ອງການສຶກສາທິການ ແລະ ກິລາເມືອງ | ຄະນະ |
| 4. | ທ່ານ ຫົວໜ້າໜ່ວຍງານກວດກາປະເມີນຜົນ ແລະ ປະກັນຄຸນນະພາບ | ຄະນະ |
| 5. | ທ່ານ ຫົວໜ້າໜ່ວຍງານກິລາກາຍຍະກຳ ແລະ ສິລະປະກຳ ຫ້ອງການ ສກມ | ຄະນະ |

**ມາດຕາ 22 ສິດ ແລະ ໜ້າທີ່ຂອງກອງເລຂາ ກພກ**

ກອງເລຂາ ແຕ່ລະຂັ້ນ ມີສິດ ແລະ ໜ້າທີ່ ດັ່ງນີ້:

**ກ.) ຂັ້ນແຂວງ**

1. ປະຕິບັດຕາມທິດຊີ້ນຳຂອງປະທານ ແລະ ຄະນະກຳມະການ ກພກ;
2. ຂື້ນແຜນການ, ແຜນງານ ແລະ ໂຄງການພັດທະນາກິລາ-ກາຍຍະກຳ ເພື່ອສະເໜີຕໍ່ຄະນະ ກພກ;
3. ສົມທົບກັບພາກສ່ວນທີ່ກ່ຽວຂ້ອງຄົ້ນຄວ້າຄັດເລືອກ, ຝຶກແອບ ແລະ ຈັດການແຂ່ງຂັນກິລາໃນລະດັບເມືອງ, ແຂວງ, ລະດັບຊາດ ແລະ ຕາມການເຊື້ອເຊີນຂອງສະຫະພັນກິລາແຫ່ງຊາດປະເພດຕ່າງໆ;
4. ກະກຽມເອກະສານຮອບດ້ານເພື່ອຂໍທິດຊີ້ນຳຈາກຄະນະກຳມະການ,ດຳເນີນກອງປະຊຸມຕ່າງໆຂອງ ກພກ;
5. ສະຫຼຸບລາຍງານວຽກງານຮອບດ້ານໃນການເຄື່ອນໄຫວວຽກງານ ກພກ;
6. ປະສານງານກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອເຂົ້າຮ່ວມກອງປະຊຸມຕາມແຜນການ ແລະ ທິດຊີ້ນຳຂອງປະທານ ແລະ ຄະນະກຳມະການ ກພກ;
7. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍ.

**ຂ.) ຂັ້ນເມືອງ**

1. ປະຕິບັດຕາມທິດຊີ້ນຳຂອງປະທານ ແລະ ຄະນະກຳມະການ ກພກ ເມືອງ;

2. ຂຶ້ນແຜນການ, ແຜນງານ ແລະ ໂຄງການພັດທະນາກິລາ-ກາຍຍະກຳ ເພື່ອສະເໜີຕໍ່ຄະນະ ກພກ ເມືອງ;
3. ສົມທົບກັບພາກສ່ວນທີ່ກ່ຽວຂ້ອງຄົ້ນຄວ້າຄັດເລືອກ, ຝຶກແອບ ແລະ ຈັດການແຂ່ງຂັນກິລາໃນລະດັບເມືອງ, ແຂວງ ແລະ ຕາມການເຊື້ອເຊີນຂອງສະຫະພັນກິລາແຂວງ ປະເພດຕ່າງໆ;
4. ກະກຽມເອກະສານຮອບດ້ານເພື່ອຂໍທິດຊີ້ນຳຈາກຄະນະກຳມະການ, ດຳເນີນກອງປະຊຸມຕ່າງໆຂອງ ກພກ ເມືອງ;
5. ສະຫຼຸບລາຍງານວຽກງານຮອບດ້ານໃນການເຄື່ອນໄຫວວຽກງານ ກພກ ເມືອງ ;
6. ປະສານງານກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອເຂົ້າຮ່ວມກອງປະຊຸມຕາມແຜນການ ແລະ ທິດຊີ້ນຳຂອງປະທານ ແລະ ຄະນະກຳມະການ ກພກ ເມືອງ;
7. ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍ.

## ໝວດທີ 6
## ຂໍ້ຫ້າມ

### ມາດຕາ 23 ຂໍ້ຫ້າມທົ່ວໄປ

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງມີພຶດຕິກຳ ດັ່ງນີ້:

1. ນຳໃຊ້ກອງທຶນ ໂດຍບໍ່ໄດ້ຮັບອະນຸມັດ ຈາກຄະນະກຳມະການຄຸ້ມຄອງ ກພກ, ນຳໃຊ້ເງິນ ກພກ ບໍ່ຖືກຕາມເປົ້າໝາຍການນຳໃຊ້ ທີ່ກຳນົດໃນຂໍ້ຕົກລົງສະບັບນີ້;
2. ສວຍໃຊ້ໜ້າທີ່ຕຳແໜ່ງ, ໂຄສະນາຕົວະຍົວະຫຼອກລວງ ເພື່ອເອົາເງິນກອງທຶນໄປໃຊ້ຈ່າຍຫາຜົນປະໂຫຍດສ່ວນຕົວ, ຄອບຄົວ ແລະ ຍາດຕິພີ່ນ້ອງ;
3. ລະເມີດລະບຽບການດ້ານການເງິນ.

### ມາດຕາ 24 ຂໍ້ຫ້າມຂອງຄະນະຮັບຜິດຊອບ

1. ສວຍໃຊ້ໜ້າທີ່ຕຳແໜ່ງເພື່ອນຳໃຊ້ເງິນກອງທຶນ ໂດຍບໍ່ຖືກຕ້ອງຕາມເປົ້າໝາຍທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;
2. ນຳໃຊ້ເງິນກອງທຶນເພື່ອຜົນປະໂຫຍດສ່ວນຕົວ, ຄອບຄົວ, ໝູ່ເພື່ອນ ແລະ ຍາດຕິພີ່ນ້ອງ;
3. ນຳໃຊ້ເງິນກອງທຶນບໍ່ຖືກຕ້ອງຕາມເປົ້າໝາຍທີ່ອະນຸມັດ;
4. ສັ່ງຈ່າຍ ຫຼື ອະນຸຍາດໃຫ້ພາກສ່ວນອື່ນກູ້ຢືມເງິນກອງທຶນໄປນຳໃຊ້ເຂົ້າໃນຮ່ອງອື່ນ.

## ໝວດທີ 7
## ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 25 ນະໂຍບາຍຕໍ່ຜູ້ທີ່ມີຜົນງານ

ບຸກຄົນ ຫຼື ການຈັດຕັ້ງທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນໆ ຕາມລະບຽບການ.

### ມາດຕາ 26 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ປະຕິບັດວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ດຳເນີນຄະດີຕາມກົດໝາຍ ຫຼື ເບົາ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

## ມາດຕາ 27 ການຈັດຕັ້ງປະຕິບັດ

ມອບໃຫ້ ພະແນກສຶກສາທິການ-ກິລາແຂວງ, ພະແນກການເງິນປະຈໍາແຂວງ, ຫ້ອງການສຶກສາທິການ-ກິລາເມືອງ ແລະ ຫ້ອງການ ການເງິນປະຈໍາເມືອງ ເປັນເຈົ້າການໃນການປະສານສົມທົບກັບພາກ ສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

ທຸກອົງການຈັດຕັ້ງຂອງລັດ, ເອກະຊົນ, ສັງຄົມ ຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

## ມາດຕາ 28 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ພາຍຫຼັງໄດ້ລົງລາຍເຊັນ ແລະ ລົງໃນຈົດໝາຍເຫດທາງລັດຖະການສິບຫ້າວັນ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ຕົກລົງ ສະບັບເລກທີ 1062/ຈຂ.ຊຍ, ລົງວັນທີ 13 ສິງຫາ 2021 ວ່າດ້ວຍກອງທຶນພັດທະນາກິລາ-ກາຍຍະກໍາ ແຂວງ ໄຊຍະບູລີ.

**ເຈົ້າແຂວງ**

**ພົງສະຫວັນ ສິດທະວົງ**

ບ່ອນສົ່ງ:

- ພະແນກການ, ກົມກອງອ້ອມຂ້າງແຂວງ 1 ສະບັບ
- ກອງພົນທະຫານຮາບທີ່2 1 ສະບັບ
- ຫ້ອງວ່າການເມືອງ ລະ 1 ສະບັບ
- ຫ້ອງການ ສກມ ລະ 1 ສະບັບ
- ໂຮງຮຽນອ້ອມຂ້າງແຂວງ-ເມືອງລະ 1 ສະບັບ